**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຄ້າ ເລກທີ0756/ກຄ.ພນ

ວຽງຈັນ, ວັນທີ 20 ມິຖຸນາ 2001

# ຂໍ້ກຳນົດ

# ວ່າດ້ວຍການຄຸ້ມຄອງການນຳເຂົ້າ ແລະ ຈຳໜ່າຍແກັສຫຸງຕົ້ມ

- ອີງຕາມ ກົດໝາຍລັດຖະບານ ເລກທີ 01/ສພຊ, ລົງວັນທີ 08/03/95;
- ອີງຕາມ ກົດໝາຍວ່າດ້ວຍ ທຸລະກິດ ເລກທີ 0394/ສພຊ, ລົງວັນທີ 18/07/94;
- ອີງຕາມ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ ຂອງ ສປປລາວ;
- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງການຄ້າ ເລກທີ 24/ນຍ, ລົງວັນທີ 24/03/99.

ລັດຖະມົນຕີ ວ່າການກະຊວງການຄ້າ ອອກຂໍ້ກຳນົດ

## ພາກທີ I

## ວ່າດ້ວຍຫຼັກການລວມ

**ມາດຕາ 1.** ຂໍ້ກຳນົດສະບັບນີ້ວາງອອກ ເພື່ອແນໃສ່ຄຸ້ມຄອງ ແລະ ເຄື່ອນໄຫວທຸລະກິດການຄ້າແກັສຫຸງຕົ້ມ, ປົກປ້ອງຜົນປະໂຫຍດອັນຖືກກົດໝາຍ ຂອງຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້, ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງ ຂອງລັດໃນຂະແໜງການຄ້າ ຊຸກຍູ້ການຂະຫຍາຍ ແລະ ພັດທະນາ ເສດຖະກິດຂອງຊາດ.

**ມາດຕາ 2.** ແກັສຫຸງຕົ້ມ ເປັນເຊື້ອເພີງຊະນິດໜຶ່ງ ເໝາະແກ່ການໃຊ້ໃນອຸດສາຫະກຳປຸງແຕ່ງ ແຕ່ກົງກັນຂ້າມ ຖ້າຫາກການຄຸ້ມຄອງ ຫຼື ການນຳໃຊ້ບໍ່ຖືກຕ້ອງຕາມລະບຽບ ມາດຖານເຕັກນິກ ກໍສາມາດເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ສຸຂະພາບ ແລະ ຊັບສິນໄດ້.

**ມາດຕາ 3.** ທຸກການເຄື່ອນໄຫວ ຂອງບັນດາຫົວໜ່ວຍ ທຸລະກິດການຄ້າ ແກັສທຸງຕົ້ມ ຕ້ອງປະຕິບັດຕາມບັນດາແຈ້ງການ, ຂໍ້ກຳນົດ ແລະ ລະບຽບກົດໝາຍ ຂອງທຸກຂະແໜງການ ທີ່ກ່ຽວຂ້ອງວາງອອກຢ່າງເຂັ້ມງວດ ແລະ ຂໍ້ກຳນົດສະບັບນີ້ ໄດ້ລວມເອົາວິສາຫະກິດນຳເຂົ້າອາຍແກັສ ແລະ ຖັງແກັສ, ໂຮງບັນຈຸແກັສ ແລະ ຮ້ານຈຳໜ່າຍແກັສ.

## ພາກທີ II

## ວ່າດ້ວຍມາດຖານ, ເງື່ອນໄຂການນຳເຂົ້າແກັສທຸງຕົ້ມ

**ມາດຕາ 4.** ວິສາຫະກິດ ຫຼື ທຸລະກິດ ນຳເຂົ້າແກັສທຸງຕົ້ມ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

4.1 ຂຶ້ນທະບຽນວິສາຫະກິດ ນຳກະຊວງການຄ້າ.

4.2 ມີທະບຽນເຄື່ອງໝາຍການຄ້າ ທີ່ໄດ້ຮັບອະນຸຍາດ ຈາກອົງການທີ່ມີໜ້າທີ່ກ່ຽວຂ້ອງ ຢູ່ ສປປລາວ.

4.3 ມີໂຮງບັນຈຸແກັສທຸງຕົ້ມ ແລະ ລະບົບສາງທີ່ເປັນກຳມະສິດ ຂອງວິສາຫະກິດ ຫຼື ທຸລະກິດທີ່ໄດ້ຮັບອະນຸຍາດຕາມກົດໝາຍ.

4.4 ມີລະບົບການປ້ອງກັນອັກຄີໄພ ທີ່ຖືກຕ້ອງຕາມມາດຖານເຕັກນິກ.

4.5 ມີຮ້ານຈຳໜ່າຍ (ຂາຍຍ່ອຍ) ແກັສທຸງຕົ້ມເປັນກຳມະສິດ ຫຼື ເປັນຕົວແທນຈຳໜ່າຍຂອງວິສາຫະກິດ.

4.6 ມີພາຫະນະຂົນສົ່ງກ່ຽວກັບວັດຖຸ ອັນຕະລາຍຕາມລະບຽບຂອງ ຄຂປກ.

**ມາດຕາ 5.** ວິສາຫະກິດທີ່ມີເງື່ອນໄຂໃນມາດຕາ 04 ແລ້ວນັ້ນ ຈະຕ້ອງປະຕິບັດເງື່ອນໄຂ ແລະ ຫຼັກການນຳເຂົ້າດັ່ງນີ້

5.1 ມີແຜນການນຳເຂົ້າແກັສເປັນງວດ, ປີ ໂດຍຜ່ານການຮັບຮອງເອົາຈາກຂະແໜງການຄ້າ

5.2 ແຈ້ງສິນຄ້ານຳເຂົ້າຕາມລະບຽບການຂອງ ຂະແໜງການຄ້າ ແລະ ການເງິນ

5.3 ຕ້ອງເສຍພາສີ-ອາກອນ ຕາມລະບຽບຫຼັກການ

5.4 ຂະໜາດບັນຈຸ, ນ້ຳໜັກຖັງ ແລະ ເຄື່ອງໝາຍການຄ້າຂອງ ວິສາຫະກິດຕ້ອງຕິດໄວ້ໃນແຕ່ລະຖັງ

5.5 ການຊຳລະສະສາງ ດ້ານການເງິນ ຕ້ອງຜ່ານລະບົບທະນາຄານທີ່ຕັ້ງຢູ່ ສປປລາວ

5.6 ຕ້ອງລາຍງານສິນຄ້າ ຄ້າງສາງປະຈຳງວດ ໃຫ້ພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ ກ່ອນວັນທີ 15 ຂອງງວດຕໍ່ໄປ

5.7 ຕ້ອງປະຕິບັດລະບຽບດ້ານລາຄາ ຕາມການອະນຸມັດຂອງຂະແໜງການຄ້າ ທີ່ມີໜ້າທີ່ກ່ຽວຂ້ອງ

**ມາດຕາ 6.** ບຸກຄົນ, ນິຕິບຸກຄົນ ທີ່ມີບໍ່ນອນ ຢູ່ໃນມາດຕາ 04 ແລະ 05 ແມ່ນບໍ່ມີສິດນຳເຂົ້າອາຍແກັສ ແລະ ຖັງແກັສ, ຖ້ານຳເຂົ້າຈະຖືວ່າເປັນ ສິນຄ້າທີ່ຜິດກົດໝາຍ ແລະ ຈະຖືກປະຕິບັດວິໄນຕາມລະບຽບກົດໝາຍຢ່າງເຂັ້ມງວດ

## ພາກທີ III
## ວ່າດ້ວຍການຈຳໜ່າຍ ແລະ ການຄຸ້ມຄອງຮ້ານຈຳໜ່າຍແກັສຫຸງຕົ້ມ

**ມາດຕາ 7.** ຮ້ານຈຳໜ່າຍແກັສຫຸງຕົ້ມ ຈະດຳເນີນທຸລະກິດໄດ້ ຕ້ອງມີ:

- ໃບອະນຸຍາດເປັນຕົວແທນຈຳໜ່າຍຈາກບໍລິສັດຜູ້ນຳເຂົ້າອາຍແກັສ
- ໃບທະບຽນວິສາຫະກິດຈາກຂະແໜງການຄ້າ
- ໃບທະບຽນອາກອນຈາກພະແນກການເງິນ

**ມາດຕາ 8.** ຮ້ານຈຳໜ່າຍແກັສຫຸງຕົ້ມ ຕ້ອງປະຕິບັດດັ່ງນີ້:

8.1 ທີ່ຕັ້ງຕ້ອງຫ່າງຈາກບ່ອນທີ່ເຮັດໃຫ້ເກີດມີຄວາມຮ້ອນຢ່າງໜ້ອຍ 50 ແມັດ ແລະ ລະດັບພື້ນຂອງຮ້ານຕ້ອງບໍ່ ຕ່ຳກວ່າລະດັບພື້ນພາຍນອກ ແລະ ໜ້າທາງ, ຖ້າເປັນຕຶກແຖວ ຫຼື ຫ້ອງແຖວ ໃຫ້ສະສົມແກັສບໍ່ໃຫ້ກາຍ 700 ກິໂລກຣາມ ຕໍ່ ໜຶ່ງຮ້ານຈຳໜ່າຍແກັສ, ຖ້າເປັນເຮືອນດ່ຽວ ຫຼື ເດີ່ນກວ້າງຂວາງໃຫ້ສະສົມໄດ້ ບໍ່ກາຍ 1500 ກິໂລກຣາມ

8.2 ຖັງຕ້ອງວາງໃຫ້ເປັນລະບຽບ ບໍ່ວາງຊະຊາຍ-ກີດຂວາງ ສະຖານທີ່ສາທາລະນະ ກໍ່ຄື ເສັ້ນທາງໄປມາ, ຕ້ອງຕັ້ງຖັງແກັສຫຸງຕົ້ມໄວ້ ໃນສະຖານທີ່ ທີ່ຈັດໄວ້ສະເພາະເທົ່ານັ້ນ, ມີທາງຍ່າງເຂົ້າ-ອອກໄດ້ສະດວກ ແລະ ຕ້ອງຕັ້ງຫ່າງຈາກ ຝາອາຄານ ຢ່າງໜ້ອຍ 60 ຊັງຕີແມັດ, ການວາງຖັງແກັສ ແມ່ນບໍ່ໃຫ້ກາຍ 2 ຊັ້ນ, ຖັງແກັສຕ້ອງຕັ້ງຕົງ ໃຫ້ວາວປິດ-ເປີດຢູ່ ຂ້າງເທິງສະເໝີ

8.3 ຫ້າມບໍ່ໃຫ້ຖ່າຍເທ ຫຼື ຄ່ອຍຖ່າຍແກັສ ລະຫວ່າງຖັງຕໍ່ຖັງ ຫຼື ຈາກຖັງໄປຍັງສິ່ງບັນຈຸອື່ນ ໃນຮ້ານຈຳໜ່າຍຢ່າງເດັດຂາດ ແລະ ຫ້າມເຮັດການບັນຈຸແກັສໃນຮ້ານຈຳໜ່າຍ

8.4 ພາຍໃນຮ້ານຈຳໜ່າຍແກັສ ຕ້ອງຕິດຕັ້ງເຄື່ອງດັບເພີງ ຊະນິດທີ່ດັບເພີງອັນເກີດຈາກແກັສ, ນ້ຳມັນເຊື້ອໄຟ ແລະ ກະແສໄຟຟ້າລັດວົງຈອນ ຊຶ່ງສາມາດຊ່ວຍດັບເພີງ ໃນເບື້ອງຕົ້ນສ່ວນໃດສ່ວນໜຶ່ງໄດ້

**ມາດຕາ 9.** ຮ້ານຈຳໜ່າຍແກັສຫຸງຕົ້ມ ຕ້ອງຕິດຕັ້ງເຄື່ອງໝາຍການຄ້າຂອງ ບໍລິສັດຜູ້ນຳເຂົ້າ ແລະ ລາຄາຂາຍໜ້າຮ້ານ, ຮ້ານຈຳໜ່າຍແກັສຫຸງຕົ້ມ ຕ້ອງຈຳໜ່າຍສະເພາະແຕ່ແກັສ ແລະ ອຸປະກອນກ່ຽວກັບແກັສ ທີ່ມີເຄື່ອງໝາຍການຄ້າຂອງ ບໍລິສັດຜູ້ນຳເຂົ້າເທົ່ານັ້ນ, ຫ້າມບໍ່ໃຫ້ເອົາແກັສຫຸງຕົ້ມ ທີ່ບໍ່ໄດ້ລົງທະບຽນການຄ້າ ໃນ ສປປລາວ ມາຂາຍຢ່າງເດັດຂາດ

**ມາດຕາ 10.** ພະນັກງານຂາຍ ຕ້ອງມີຄວາມຮູ້ພື້ນຖານ ກ່ຽວກັບແກັສ ແລະ ວິທີການຂາຍແກັສ, ບໍລິສັດຜູ້ນຳເຂົ້າ ຕ້ອງຝຶກອົບຮົມຄວາມຮູ້ ພື້ນຖານ ແລະ ວິຊາການຕ່າງໆ ກ່ຽວກັບແກັສຫຸງຕົ້ມ ທີ່ຈຳເປັນໃຫ້ແກ່ຮ້ານຈຳໜ່າຍ ແລະ ພະນັກງານຈຳໜ່າຍ

## ພາກທີ IV
## ວ່າດ້ວຍການກວດກາ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 11.** ພາກສ່ວນທີ່ກ່ຽວຂ້ອງ ຂອງລັດ ມີສິດລົງກວດກາການເຄື່ອນໄຫວຂອງ ບັນດາບໍລິສັດ ແລະ ຮ້ານຈຳໜ່າຍແກັສຫຸງຕົ້ມ ໄດ້ທຸກເວລາ ໂດຍມີການແຈ້ງການລ່ວງໜ້າ ຫຼື ບໍ່ແຈ້ງການລ່ວງໜ້າກໍ່ໄດ້, ຕາມໜ້າທີ່ ວິຊາສະເພາະຂອງຕົນ

**ມາດຕາ 12.** ບັນດາບໍລິສັດ ແລະ ຮ້ານຈຳໜ່າຍແກັສທຸງຕົ້ມ ຕ້ອງໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ກວດກາ

**ມາດຕາ 13.** ຖ້າກວດເຫັນປະກົດການ ຫຼື ການກະທຳທີ່ບໍ່ຖືກຕ້ອງ ຕາມຂໍ້ກຳນົດສະບັບດັ່ງກ່າວ ຫຼື ລະບຽບກົດ ໝາຍ, ເຈົ້າໜ້າທີ່ ມີໜ້າທີ່ຕັກເຕືອນ, ຫຼື ທັງຕັກເຕືອນ ພ້ອມປັບໃໝ ໃນມູນຄ່າ 500.000 ກີບ ຫາ 3.000.000 ກີບ ໃນກໍລະນີຮ້າຍແຮງ, ຊຶ່ງຈະນຳຜົນເສຍຫາຍມາສູ່ສັງຄົມ, ເຈົ້າໜ້າທີ່ມີສິດ ສັ່ງໂຈະການດຳເນີນທຸລະກິດຊົ່ວຄາວ ໂດຍມີລາຍລັກອັກສອນລາຍງານຫາ ຂັ້ນເທິງ ເພື່ອອອກຄຳສັ່ງຍຸດຕິກິດຈະການໂດຍຖາວອນ ແລະ ດຳເນີນຄະດີຕາມລະບຽບກົດໝາຍ

**ມາດຕາ 14.** ຖ້າກວດເຫັນສິນຄ້າ (ແກັສ ແລະ ອຸປະກອນກ່ຽວກັບແກັສ) ທີ່ບໍ່ໄດ້ລົງທະບຽນການຄ້າ ຢູ່ ສປປລາວ ແມ່ນຕ້ອງຍຶດມາເປັນຂອງລັດ ໂດຍບໍ່ມີການໄຖ່ຖອນ ແລະ ເສຍພາສີຄືນໃດທັງສິ້ນ ພ້ອມທັງປັບໃໝ ຕາມລະບຽບກົດໝາຍ ຂອງ ສປປລາວ

## ພາກທີ V
## ວ່າດ້ວຍການຈັດຕັ້ງປະຕິບັດ

**ມາດຕາ 15.** ໃຫ້ກົມການຄ້າພາຍໃນ, ພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຈັດຕັ້ງປະຕິບັດຕາມ ພາລະບົດບາດ ໃນຂອບເຂດທີ່ຕົນຮັບຜິດຊອບຢ່າງເຂັ້ມງວດ

**ມາດຕາ 16.** ຂໍ້ກຳນົດ ມີຜົນສັກສິດນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ກຳນົດ, ກົດລະບຽບໃນເມື່ອກ່ອນ ທີ່ຂັດກັບເນື້ອໃນຂໍ້ກຳນົດສະບັບນີ້ ລ້ວນແຕ່ຖືກຍົກເລີກ

**ລັດຖະມົນຕີ ວ່າການກະຊວງການຄ້າ**

**ພູມີ ທິບພະວອນ**